# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ 15 ສິງຫາ 2010 (15-8-2010)

## ສະແດງຄວາມເມດຕາ

**ຂໍ້ພຣະຄັມພີໃນບົດຮຽນນີ້:** 2 ຊາມູເອນ 9:1-13

**ຄຳຖາມຊີວິດ:** ບົດຮຽນນີ້ຈະຊ່ວຍໜູນໃຈທ່ານໃຫ້ສະແດງຄວາມສຸພາບອ່ອນຫວານຂອງພຣະເຈົ້າ.

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າມີພຣະປະສົງໃຫ້ປະຊາກອນຂອງພຣະອົງຊອກຫາໂອກາດເພື່ອສະແດງຄວາມເມດຕາຕໍ່ຄົນອື່ນ ແລະໃຊ້ໂອກາດນັ້ນຮັບໃຊ້.

**ຜົນສະທ້ອນຕໍ່ຊີວິດ:** ຄວາມເມດຕາແມ່ນລັກສະນະຂອງພຣະເຈົ້າ ແຕ່ເຫັນວ່າຫລາຍຄົນໃນສມັຍນີ້ບໍ່ມີທ່າທາງສຸພາບ ແລະເມດຕາ ພວກເຂົາອາດເປັນຄົນເຫັນແກ່ຕົວ ບໍ່ຄຳນຶງຕໍ່ຄົນອື່ນ ພວກເຮົາຄິດວ່າຄົນອື່ນບໍ່ດີ ແລະຕ້ອງການຕອບສນອງດ້ວຍການເຮັດບໍ່ດີແທນ ເຖິງແມ່ນຕໍ່ຄອບຄົວຄົນທີ່ເຂົາຮັກເຮົາ. ຫລາຍເທື່ອພວກເຮົາຢາກໃຫ້ຄົນທີ່ເຮັດບໍ່ດີຮັບໂທດຈາກການກະທຳຂອງເຂົາ ແລະມີຈິດໃຈຢາກທຳລາຍເຂົາ. ຄວາມຄິດດັ່ງນັ້ນເປັນສິ່ງກົງກັນຂ້າມກັບຄຳສອນໃນພຣະຄັມພີທີ່ສອນພວກເຮົາວ່າ ໃຫ້ສະແດງຄວາມເມດຕາຕໍ່ທຸກໆຄົນ.

ຄຣິສະຕຽນຄົນນຶ່ງໄດ້ເຫັນ ນາງ ທາຣາ ໄປຕລາດ ເວລາເອົາຂອງໄປຈ່າຍກໍເຫັນວ່ານາງບໍ່ມີເງິນພໍຈະຈ່າຍຂອງທີ່ນາງເອົາມາ ນາງພະຍາຍາມສົ່ງຂອງບາງຢ່າງຄືນ ມີຄຣິສຕຽນຄົນນຶ່ງໄດ້ໂອກາດຈຶ່ງຂໍຊ່ວຍ. ນາງ ທາຣາ ໄດ້ເລົ່າສູ່ຟັງວ່າໃນເດືອນດຽວກັນສາມີຂອງລາວໄດ້ຕາຍ ແລະນາງເອງກໍເປັນຄົນວ່າງງານ ນາງມີບັນຫາໜັກຈຳເປັນຕ້ອງລ້ຽງລູກນ້ອຍ. ຄຣິສະຕຽນຄົນນັ້ນໄດ້ແນະນຳລາວໃຫ້ໄປຕິດຕໍ່ກັບຄຣິສຕະຈັກໃນເມືອງທີ່ລາວຢູ່ ເພາະມີຫລາຍໆຄົນມີນ້ຳໃຈຄວາມຮັກ ແລະເມດຕາທີ່ຈະຊ່ອຍນາງ. ໃນທີ່ສຸດນາງກໍໄດ້ພົບຫລາຍໆຄົນຜູ້ມີຄວາມອ່ອນສຸພາບໃນຄຣິສຕະຈັກນັ້ນ. ຕໍ່ມາບໍ່ນານນາງກໍໄດ້ພົບກັບອົງພຣະຄຣິດ, ໄດ້ງານທຳຍ້ອນສະມາຊິກ ແລະຊີວິດຂອງນາງກໍເລີ້ມດີຂຶ້ນ. ຄຳຖາມມີຢູ່ວ່າ ບໍ່ມີໃຜຮູ້ແນ່ນອນວ່າການກະທຳທີ່ສຸພາບອ່ອນຫວານ ເມດຕາຕໍ່ຄົນອື່ນນັ້ນມັນອາດເຮັດໃຫ້ຄົນອື່ນເຫັນອົງພຣະຄຣິດໃນຕົວເຮົາໄດ້.

ກະສັດດາວິດໄດ້ສະແດງຄວາມເມດຕາປານີ. ເມຟີໂບເຊັດເປັນຄົນພິການເໝືອນພໍ່ປູ່ແລະພໍ່ຂອງລາວ. ຊາອູນແລະໂຢນາທານຕາຍໃນສນາມຮົບ (2 ຊາມູເອນ 4:4). ຄົນໃຊ້ໄດ້ອຸ້ມເອົາ ເມຟີໂລເຊັດຜູ້ມີອາຍຸໄດ້ພຽງຫ້າປີ ແລະຟ້າວແລ່ນໜີຈາກພວກຟີລິສຕິນ ເວລາໄປນຳທາງເລີຍຫລຸດມືເຮັດໃຫ້ລາວກາຍເປັນຄົນພິການ. ກະສັດດາວິດໄດ້ສະແດງຄວາມເມດຕາ ແທນທີ່ຈະຊອກຂ້າລ້າງໂຄດ ເພິ່ນໄດ້ມີຈິດໃຈອ່ອນຫວານ ແລະເມດຕາຕໍ່ຄອບຄົວໂຢນາທານນັ້ນ. ເຫດການນີ້ໄດ້ປ່ຽນສະພາບໃນຊີວິດຂອງເມຟີໂບເຊັດ.

### 1. <u>ຄວາມຕັ້ງໃຈສະແດງເຖິງຄວາມສຸພາບ</u> (2 ຊາມູເອນ 9:1-3)

ກະສັດດາວິດມີເຫດຜົນຫລາຍຢ່າງທີ່ຈະທຳລາຍຄອບຄົວຂອງຊາອູນຜູ້ຍັງເຫລືອຢູ່ ຕາມທຳນຽມແລ້ວຕ້ອງຂ້າລ້າງໂຄດ. ເຄີຍມີສອງຄັ້ງ ຊາອູນພະຍາຍາມຈະຂ້າດາວິດຢູ່ໃນເຮືອນ (1 ຊາມູເອນ 18: 10-11; 19:9-10). ແຕ່ຢ່າງໃດກໍຕາມ ດາວິດເຄີຍສັນຍາກັບໂຢນາທານລູກຊາຍຂອງຊາອູນວ່າຈະເຮັດແຕ່ສິ່ງດີຕໍ່ກັນ (1 ຊາມູເອນ 20:14-15). ດັ່ງ

ນັ້ນ ກະສັດດາວິດຈຶ່ງຊອກຫາຜູ້ເປັນເຊື້ອສາຍ ເພື່ອຕົນເອງຈະໄດ້ກະທຳຄວາມດີ **ສຸພາບເມດຕາຕໍ່ເໝືອນຄຳສັນຍາຕໍ່ໂຢນາທານນັ້ນ.**

ຄຳວ່າ ເມດຕາໃຊ້ໃນຕອນນີ້ບໍ່ໄດ້ໝາຍເຖິງການກະທຳດີຊື່ໆ ແຕ່ມັນເປັນເພາະຄຳສັນຍາທີ່ໄດ້ເຮັດໄວ້ຢ່າງສັດຊື່. ດາວິດມີຄວາມຕັ້ງໃຈໄວ້ວ່າຈະເຮັດໃຫ້ຄຳສັນຍານັ້ນເປັນຈິງຕໍ່ໂຢນາທານ ແລະຄອບຄົວຂອງລາວ ເຖິງແມ່ນລາວຕາຍໄປແລ້ວກໍຕາມ.

ທ່ານເຄີຍສັນຍາກັບຄົນໃດຄົນນຶ່ງບໍ່? ພວກເຮົາຈຳເປັນຕ້ອງແບ່ງປັນຂ່າວປະເສີດເພື່ອຄົນອື່ນຈະມີໂອ ກາດຮັບເອົາອົງພຣະເຢຊູບໍ່? ພວກເຮົາມີຈິດໃຈຢາກຊ່ອຍຄົນອື່ນຫລືບໍ່? ຍ້ອນພວກເຮົາມີຄວາມສຳພັນກັບອົງພຣະເຢຊູຄຣິດແລະພຣະອົງໄດ້ຊົງອວຍພຣະພອນແກ່ພວກເຮົາຢ່າງຫລວງຫລາຍ, ພວກເຮົາມີຄວາມຮັບຜິດຊອບໃນການບອກເລື່ອງນີ້ໃຫ້ເຂົາຮູ້ວ່າ ພຣະເຈົ້າຊົງຮັກພວກເຮົາໃນພຣະຄັມພີ ແລະການກະທຳຂອງພວກເຮົາ.

ຄົນໃຊ້ຜູ້ນຶ່ງມີຊື່ວ່າ ຊີບາ ໄດ້ເປັນຜູ້ຮັກສາຊັບສົມບັດຂອງຊາອູນຫລັງຈາກເພິ່ນຕາຍໄປ, ເມຟີໂບເຊັດ ໄດ້ອາສັຍຢູ່ຕ່າງແດນເປັນເວລາຫລາຍປີຊຶ່ງຫ່າງໄກຈາກດາວິດ. ໃນເມື່ອດາວິດຮູ້ວ່າເມຟີໂບເຊັດ ມີລູກຊາຍຊື່ວ່າຊີບາ ແລະຊີບາກໍສັນຍາວ່າຈະເປັນ**ຂ້າໃຊ້**ຄົນສັດຊື່ຕໍ່ດາວິດ ແຕ່ເຫັນວ່າລາວ**ເປັນຄົນພິການ.**

ດາວິດຕັ້ງໃຈໄວ້ວ່າຈະສະແດງຄວາມເມດຕາຕໍ່ຊີບາ ເຖິງແມ່ນວ່າຊີບາບໍ່ສົມຄວນກໍຕາມ ເພາະພໍ່ປູ່ລາວຄືຊາອູນນັ້ນເປັນສັດຕຣູຜູ້ກຽດຊັງເພິ່ນທີ່ສຸດ. ດາວິດໄດ້ມີຄວາມເມດຕາສົງສານຕໍ່ຜູ້ເປັນຫລານຊາຍຂອງຜູ້ເຄີຍຫາໂອກາດຂ້າຕົນເອງ. ຖ້າພວກເຮົາລໍຖ້າໃຫ້ຄົນອື່ນເຮັດຄວາມດີຕໍ່ເຮົາກ່ອນນັ້ນ ກໍເຫັນວ່າໂອກາດກໍມີນ້ອຍທີ່ສຸດ ແລະພວກເຮົາກໍພົດໂອກາດທີ່ຈະສະແດງຄວາມເມດຕາໄດ້. ຂອບພຣະຄຸນພຣະເຈົ້າ ພຣະອົງບໍ່ໄດ້ລໍໃຫ້ພວກເຮົາເປັນຄົນດີກ່ອນພຣະອົງໄດ້ສົ່ງພຣະບຸດອົງດຽວລົງມາຊ່ອຍພວກເຮົາ.

**ຄວາມເມດຕາ**

ໃນພາສາເຮັບເຣີແມ່ນ ຄວາມດີ ຄວາມເມດຕາ ຄວາມຮັກ ຫລືຄວາມຊັດຊື່. ເປັນຄວາມເວົ້າເຖິງທາງທີ່ພວກເຮົາຄວນກະທຳຕໍ່ຜູ້ອື່ນ. ຄວາມສຸພາບຄືເຮັດແຕ່ສິ່ງທີ່ດີເພາະຂຶ້ນກັບຄຳສັນຍາກັນໄວ້ກັບຄົນອື່ນໆ. ໃນເມື່ອເວົ້າເຖິງພຣະເຈົ້າແລ້ວກໍເຫັນວ່າ ຄວາມເມດຕານີ້ມີຫລວງຫລາຍ ແລະຄົງຢູ່ຕລອດໄປ. ພຣະເຈົ້າໄດ້ສະແດງຄວາມເມດຕາກະຣຸນາຕໍ່ຄຣິສະຕຽນ ເພາະວ່າເຂົາເຈົ້າມີຄວາມສຳພັນກັບພຣະອົງໂດຍຜ່ານທາງພຣະໂລຫິດຂອງພຣະບຸດຂອງພຣະອົງ (ເຮັບເຣີ 10:16-17). ໃນເມື່ອພວກເຮົາສະແດງຄວາມເມດຕາຕໍ່ຄົນອື່ນພວກເຮົາກໍເອົາພຣະອົງເປັນຕົວຢ່າງໃນຊີວິດ.

## 2. ຊອກຫາໂອກາດເພື່ອຈະສະແດງຄວາມເມດຕາ (2 ຊາມູເອນ 9:4-6)

ກະສັດດາວິດບໍ່ໄດ້ຖາມເຖິງລາຍລະອຽດພຽງແຕ່ຖາມວ່າ "ເມຟີໂບເຊັດຢູ່ໃສ?" ເພາະເພິ່ນຊອກຫາໂອກາດຈະສະແດງຄວາມເມຕາຕໍ່ເມຟີໂບເຊັດ. ຊີບາ ໄດ້ບອກວ່າ ເມຟີໂບເຊັດ ຢູ່ໃນເມືອງ ໂລເດບາ ບ້ານຂອງມາກີ. ໂລເດບາຕັ້ງຢູ່ຊາຍແດນຕາເວັນອອກຂອງແມ່ນ້ຳຈໍແດນ. ຜູ້ປະກາດ ອາໂມດໄດ້ໄປເຖິງເມືອງນີ້ (ອາໂມດ 6:13).

ກະສັດດາວິດໄດ້ສົ່ງຄົນໄປເອົາ ເມຟີໂບເຊັດ ແລະຄົນໃຊ້ກໍໄດ້ນຳເມຟີໂບເຊັດມາພົບກະສັດດາວິດຈາກບ່ອນດິນແຫ້ງແຫລ້ງມາໃນວັງ. ແຕ່ເມຟີໂບເຊັດ ບໍ່ຮູ້ວ່າກະສັດດາວິດມີຄວາມຫວັງດີນຳ. ແຕ່ທັວທີເມຟີໂບເຊັດ ໄດ້**ກົ້ມຂາບລົງດິນ**ເພາະເປັນການໃຫ້ກຽດ ທັງໆທີ່ລາວມີສິດໃນການເອົາບັງລັງຄືນເພາະເປັນເຊື້ອສາຍກະສັດ. ລາວໄດ້ກົ້ມລົງຈຳດິນເພື່ອໃຫ້ດາວິດຮູ້ວ່າລາວບໍ່ມີຄວາມຕ້ອງການນັ່ງບັນລັງນັ້ນ.

มันเป็นງ่າຍທີ່ຈະສະແດງຄວາມສຸພາບ ເມດຕາຕໍ່ຄົນທີ່ມີຄວາມດີກັບເຮົາ. ແຕ່ກະສັດດາວິດໄດ້ສະແດງຄວາມເມດຕາຕໍ່ຜູ້ບໍ່ມີຄວາມສຳຄັນອັນໃດ. ເມຟີໂບເຊັດ ອາດບໍ່ເປັນນາຍທະຫານຜູ້ເກັ່ງກ້າ ຫລືເປັນຜູ້ໃຫ້ຄວາມປຶກສາໄດ້ ແຕ່ດາວິດໄດ້ສະແດງຄວາມເມດຕາສິ່ງສານ. ເຊັ່ນກັນ ພວກເຮົາຄວນເອົາດາວິດເປັນຕົວຢ່າງເພື່ອຈະຊອກຫາໂອກາດສະແດງຄວາມເມດຕາຕໍ່ຄົນອື່ນໆຜູ້ບໍ່ສົມຄວນອັນໃດເລີຍ.

ຕໍ່ມາມາກີຣ ຜູ້ເບິ່ງແຍງ ເມຟີໂບເຊັດ ກັບມາຫາດາວິດ ເວລາລູກຊາຍຂອງດາວິດຄື ອັບຊາໂລມໄດ້ເປັນກະບົດແລະຍາດເອົາບັນລັງ. ດາວິດໄດ້ເອົາຕົວຫລົບໜີໄປໃນປ່າແລະຂາດສະບຽງອາຫານ ມາກີຣເປັນຜູ້ຊ່ວຍດາວິດໃນເວລາຈຳເປັນນັ້ນ (2 ຊາມູເອັນ 17:27-29). ເຖິງແມ່ນວ່າດາວິດບໍ່ໄດ້ຮັບໃຊ້ເມຟີໂບເຊັດເພື່ອຜົນປໂຍດ ແຕ່ທີ່ສຸດມັນກໍຕິດຕາມມາຈົນໄດ້.

### 3. <u>ປະຕິບັດຄວາມເມດຕາ</u> ( 2 ຊາມູເອນ 9:7-13)

ກະສັດດາວິດໄດ້ເອົາຄວາມເມດຕາມາປະກອບໃຊ້ຕໍ່ເມຟີໂບເຊັດ ເພາະຕາມປົກກະຕິກະສັດຕ້ອງຂ້າຜູ້ເປັນເຊື້ອກະສັດເພື່ອບໍ່ໃຫ້ມາຍາດເອົາບັງລັງ. ດາວິດໄດ້ເວົ້າຕໍ່ເມຟີໂບເຊັດຜູ້ເສັງອິງຄະວ່າ **ບໍ່ຕ້ອງຢ້ານ** ເພາະເພິ່ນເປັນຄົນມີ**ຄວາມເມດຕາປານີ**, ເພິ່ນຊົງຈຳຄຳສັນຍາກັບຜູ້ເປັນບິດາຂອງເມຟີໂບເຊັດໄດ້ດີ.

ສິ່ງນຶ່ງທີ່ກະສັດດາວິດໄດ້ເຮັດເພື່ອເປັນການສະແດງເຖິງຄວາມເມດຕາແມ່ນເພິ່ນໄດ້ສິ່ງດິນທີ່ເປັນຂອງຊາອູນຄືນດິນຕອນນັ້ນຢູ່ປະມານສາມໄມທາງເໜືອຂອງກຸງເຢຣູຊາເລັມ. ເວລານີ້ດາວິດໄດ້ສົ່ງໂດຍສິ່ງດິນເປັນຈຳນວນຫລາຍເພື່ອເປັນການສະແດງເຖິງຄວາມເມດຕາຕໍ່ເມຟີໂບເຊັດ ຜູ້ເປັນເຊື້ອສາຍແລະຈະສືບບັນລັງຄົນຕໍ່ໄປ. ເປັນການສ່ຽງເພາະເມຟີໂບເຊັດ ຍັງຢູ່ໃນແຜ່ນດິນ ຖ້າດາວິດເຮັດບໍ່ເປັນທີ່ພໍໃຈ ລາວອາດມີໂອກາດໂຄ່ນລົ້ມໄດ້.

ພວກເຮົາມີຂໍ້ຜູກມັດຄືຕ້ອງບອກຄົນອື່ນໃຫ້ຮູ້ເຖິງຄວາມ
ຮັກຂອງພຣະເຈົ້າຕໍ່ພວກເຂົາອີງຈາກພຣະຄັມພີ ແລະການກະທຳຂອງພວກເຮົາ.

. ກະສັດດາວິດໄດ້ຮັກສາຄຳສັນຍາກັບຄອບຄົວຂອງ ໂຢນາທານ. ເມຟີໂບເຊັດບໍ່ເຊື່ອກັບສິ່ງທີ່ຕົນເອງໄດ້ຍິນ ລາວໄດ້**ກົ້ມຂາບລົງ** ແລະຮ້ອງຕົນເອງວ່າເປັນ**ຜູ້ຮັບໃຊ້.** ລາວຍັງຮູ້ຕົນເອງວ່າເປັນ**ໝາຕາຍໂຕນຶ່ງ** ເພື່ອເປັນການຖ່ອມຕົວຕໍ່ໜ້າຂອງກະສັດ. ຄຳເວົ້າແລະຄວາມຮູ້ເຊັ່ນນັ້ນ ດາວິດກໍເຄີຍໃຊ້ມາແລ້ວສອງເທື່ອຕໍ່ໜ້າກະສັດຊາອູນ (1 ຊາມູເອັນ 24:1; 1 ຊາມູເອັນ 26:20). ຕອນນີ້ດາວິດເຂົ້າໃຈດີເຖິງສະພາບຂອງເມຟີໂບເຊັດ.

ຕອນນີ້ເດັກເສັງອິງຄະໄດ້ກິນເຂົ້າຮ່ວມໂຕະກັບກະສັດເໝືອນກັບເປັນລູກຊາຍຄົນນຶ່ງ. ທຸກໆວັນເວລາຮັບປະທານອາຫານ ເມຟີໂບເຊັດ ໄດ້ນັ່ງຮ່ວມໂຕະເພາະຍ້ອນຄວາມເມດຕາຂອງດາວິດ.

ໃນເມື່ອພວກເຮົາໄດ້ອ່ານເຖິງເຣື່ອງນີ້ ພວກເຮົາຈຳໄດ້ດີເພາະພຣະເຈົ້າມີຄວາມເມດຕາຕໍ່ເຮົາ ແລະນຳພາໃຫ້ເຮົາຖິ້ມໃຈເກົ່າແລະເອົາໃຈໃໝ່ (ໂຣມ 2:4). ພວກເຮົາຈຳໄດ້ເຖິງສະພາບເປັນຄົນເສັງອິງຄະຂອງພວກເຮົາ ແລະພວກເຮົາໄດ້ນັ່ງໂຕະຮ່ວມກັບອົງພຣະຜູ້ເປັນເຈົ້າ ແລະຮູ້ວ່າໃນເມື່ອເຮົາມີອົງພຣະວິນຍານບໍຣິສຸດ ພວກເຮົາສາມາດມີຄວາມເມດຕາຕໍ່ຄົນອື່ນເໝືອນກັບພຣະເຈົ້າໄດ້ກະທຳຕໍ່ພວກເຮົາ.

**ຂ້າພະເຈົ້າສາມາດສະແດງຄວາມເມດຕາ**

- ຕໍ່ຜູ້ເປັນພໍ່ ເປັນແມ່ _______________________________________________
- ຕໍ່ລູກເຕົ້າ_______________________________________________________
- ຕໍ່ເພື່ອນຝູງ______________________________________________________
- ຕໍ່ເພື່ອນຮ່ວມງານ__________________________________________________

## ບົດຮຽນໃນຊີວິດ

ຄວາມເມດຕາເລີ້ມຈາກຈິດໃຈຂອງພຣະເຈົ້າ. ພຣະອົງໄດ້ສະແດງຄວາມເມດຕາຕໍ່ພວກເຮົາເມື່ອພຣະອົງໄດ້ສົ່ງພຣະບຸດອົງດຽວຂອງພຣະອົງເຂົ້າມາໃນໂລກນີ້ ພຣະເຢຊູໄດ້ສິ້ນພຣະຊົນແທນຄວາມຜິດບາບຂອງພວກເຮົາ. ພວກເຮົາບໍ່ມີອັນໃດຈະມອບໃຫ້ພຣະອົງຄືນ. ພວກເຮົາໄດ້ຢູ່ໃນດິນແດນແຫ້ງແລ້ງເພາະໂດຍຄວາມຜິດບາບຂອງພວກເຮົາເອງ. ແຕ່ແນວໃດກໍຕາມພຣະເຈົ້າຊົງມີພຣະປະສົງພ້ອມທີ່ຈະສະແດງຄວາມເມດຕາຕໍ່ພວກເຮົາ. ໃນເມື່ອພວກເຮົາໄດ້ຮັບເອົາອົງພຣະເຢຊູ ອົງພຣະວິນຍານໄດ້ເຂົ້າມາໃນຊີວິດຂອງພວກເຮົາໃຫ້ມີຄວາມສາມາດເກີດມີຄວາມເມດຕາຕໍ່ຄົນອື່ນໄດ້. ໃນເມື່ອພວກເຮົາມີຄວາມເມດຕາຕໍ່ຄົນອື່ນ ພວກເຮົາກໍສະແດງຄວາມເມດຕາຂອງພຣະເຈົ້າເພາະສິ່ງນັ້ນເປັນການກະທຳຂອງພຣະເຈົ້າຕໍ່ພວກເຮົາ.

ພວກເຮົາຄວນຮຽນນຳຕົວຢ່າງຂອງກະສັດດາວິດ ເພື່ອຊ່ວຍເຮົາໃຫ້ມີຄວາມເມດຕາເໝືອນພຣະເຈົ້າໄດ້ເຮັດໃນອົງພຣະເຢຊູຄຣິດ.

- ພວກເຮົາຈຳເປັນຕ້ອງສະແດງຄວາມເມດຕາຕໍ່ຄົນອື່ນໃນເມື່ອເຫັນວ່າພວກເຂົາບໍ່ສົມຄວນໄດ້ຮັບ ຫລືພວກເຂົາບໍ່ມີຄວາມສາມາດຈະຕອບສນອງຄືນ.
- ພວກເຮົາຈຳເປັນຕ້ອງຊອກສແວງຫາໂອກາດເພື່ອຈະສະແດງຄວາມເມດຕາຕໍ່ຄົນອື່ນ ແທນທີ່ຈະນັ່ງຢູ່ລ້າໆລໍໃຫ້ຄົນອື່ນເຮັດຕໍ່ຕົນເອງກ່ອນ.
- ການເວົ້າເຖິງຄວາມເມດຕາ ແລະການຝຶກໃຊ້ຄວາມເມດຕານັ້ນແຕກຕ່າງກັນ; ພວກເຮົາຈຳເປັນຕ້ອງເອົາຄວາມເມດຕາມາປະກອບໃຊ້ໃນຊີວິດ.
- ຝຶກຫັດໃຊ້ຄວາມເມດຕາ ເຮັດໃຫ້ພວກເຮົາມີຊີວິດເໝືອນພຣະເຈົ້າ ແລະນຳເອົາຄົນມາໃກ້ພຣະອົງຫລາຍຂຶ້ນ.

ໃນໂລກນີ້ພວກເຮົາເຫັນຄຸນຄ່າຂອງຄວາມເມດຕານ້ອຍເກີນໄປ, ການສະແດງເຖິງຄວາມສຸພາບໂດຍໄຂປະຕູໃຫ້ຄົນອື່ນ, ຍອມໃຫ້ຄົນອື່ນອອກໜ້າ ເປັນສິ່ງພວກເຮົາຕ້ອງການທີ່ສຸດ. ທຸກວັນນີ້ພວກເຮົາຊອກສແວງຫາໂອກາດເພື່ອຈະສະແດງຄວາມເມດຕາ ແລະສຸພາບອ່ອນຫວານຕໍ່ຄົນອື່ນເພື່ອພວກເຮົາຈະມີໂອກາດບອກຄົນເຫລົ່ານັ້ນໃຫ້ຮູ້ຈັກວ່າພວກເຂົາມີສິດເຂົ້າຮ່ວມໂຕະກັບອົງພຣະຜູ້ເປັນເຈົ້າໄດ້.

**ອຸປຖຳໂດຍ ລາວຊາວເທີນບັບຕິສສຳພັນ** www.lsbf.org.,by BV.